ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
Lao Chamber of Professional Accountants and Auditors

# ບົດລາຍງານ

## ການເຄື່ອນໄຫວວຽກງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

## ມັງກອນ (1) - ທັນວາ (12) 2019

# ສາລະບານ

I. ສະຖານະພາບລວມ: ............ 1
1.1 ດ້ານກົດໝາຍ: ............ 1
1.2 ດ້ານນິຕິກຳ ພາຍໃນ: ............ 2
1.3 ດ້ານການຈັດຕັ້ງ: ............ 2
II. ດ້ານການເຄື່ອນໄຫວ: ............ 5
2.1 ການປະສານງານ ແລະ ການຮ່ວມມື ............ 5
2.2 ການຈັດຝຶກອົບຮົມ: ............ 6
III. ດ້ານການເງິນ ............ 21
3.1 ລາຍຮັບ: ............ 21
3.2 ຂີງເຂດລາຍຈ່າຍ: ............ 21
ແຜນການເຄື່ອນໄຫວປະຈຳປີ 2020 ............ 22
ເອກະສານລາຍງານການເງິນ ຂອງ ສວ-ບກລ ............ 23

# I. ສະຖານະພາບລວມ:

## 1.1 ດ້ານກົດໝາຍ:

1.1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງຢູ່ພາຍໃຕ້ການຊີ້ນໍາ ຂອງກະຊວງການເງິນ ຖືກສ້າງຕັ້ງຂຶ້ນ ໃນປີ 1998 ຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນເລກທີ 0722/ກງ ເພື່ອປະຕິບັດຕາມດໍາລັດຂອງນາຍົກລັດຖະມົນຕີເລກທີ 161/ນຍ ໃນປີ 1996. ຈາກນັ້ນໄດ້ປ່ຽນຊື່ ເປັນສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ເລກທີ 1004/ກງ ລົງວັນທີ 7 ເມສາ 2015 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການກວດສອບອິດສະລະປີ 2014.

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA), ຊຶ່ງປັດຈຸບັນປະເທດມຽນມ່າເປັນປະທານ. ສອ-ບກລ ໄດ້ເຂົ້າເປັນສະມາຊິກສົມທົບຂອງ ສະຫະພັນນັກບັນຊີສາກົນ (IFAC) ຊຶ່ງໄດ້ຖືກຮັບຮອງເປັນທາງການໃນວັນທີ 13 ພະຈິກ 2019 ຊຶ່ງມີຂໍ້ຜູກມັດປະຕິບັດແຜນການດໍາເນີນງານ ທີ່ສອດຄ່ອງກັບ 7 ພັນທະຕົ້ນຕໍທີ່ຖືກກໍານົດໂດຍສະຫະພັນນັກບັນຊີສາກົນ.

**1.1.2 ພາລະບົດບາດຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:**

ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ທີ່ໄດ້ກໍານົດໃນກົດໝາຍວ່າດ້ວຍການກວດສອບອິດສະລະແມ່ນການປະກອບຄໍາເຫັນໃຫ້ແກ່ລັດ, ປຸກລະດົມຂົນຂວາຍ, ນໍາພາ, ເຕົ້າໂຮມສະມາຊິກລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ, ຊ່ວຍອົງການຂອງລັດໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

**1.1.3 ໜ້າທີ່ຫຼັກຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:**

ໜ້າທີ່ຫຼັກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ການກວດສອບ; ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາປະເທດພາກພື້ນ ແລະ ສາກົນ; ແລະ ຕິດຕາມກວດກາການເຄື່ອນໄຫວຂອງສະມາຊິກຕົນ.

ນອກນັ້ນ, ຍັງຕ້ອງສືບຕໍ່ປັບປຸງຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ແລະ ການຝຶກອົບຮົມແບບຕໍ່ເນື່ອງ (CPD) ໃຫ້ສອດຄ່ອງກັບສັນຍາຮັບຮູ້ເຊິ່ງກັນແລະກັນດ້ານການບໍລິການບັນຊີອາຊຽນທີ່ລັດຖະບານລາວໄດ້ເຊັນຮ່ວມກັບບັນດາປະເທດສະມາຊິກອາຊຽນໃນປີ 2015 (ພາຍຫຼັງທີ່ໄດ້ເຊັນສັນຍາຂໍ້ຕົກລົງໃນປີ 2014).

ເພື່ອສາມາດດໍາເນີນໜ້າທີ່ໃນການຈັດຝຶກອົບຮົມ ລັດຖະມົນຕີກະຊວງການເງິນໄດ້ອອກຂໍ້ຕົກລົງ ເລກທີ 3777/ກງ ລົງວັນທີ 2 ພະຈິກ 2015 ວ່າດ້ວຍການອະນຸມັດໃຫ້ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ດໍາເນີນການຝຶກອົບຮົມດ້ານວິຊາຊີບ.

### 1.2 ດ້ານນິຕິກຳ ພາຍໃນ:

- ຄົ້ນຄວ້າສ້າງລະບຽບການຝຶກງານ ສຳລັບຊຸດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ ແລະ ສາມາດນຳໃຊ້ເຂົ້າໃນສະພາບການຕົວຈິງຂອງລາວ. ລະບຽບການດັ່ງກ່າວ ໄດ້ຮ່າງຂຶ້ນໂດຍທີ່ປຶກສາຂອງ ສອ-ບກລ ໂດຍໄດ້ເກັບກຳຂໍ້ມູນລະອຽດກ່ຽວກັບສະພາບຕົວຈິງ ຂອງຜູ້ທີ່ຈະເປັນນັກຝຶກງານ ແລະ ຜ່ານການຄົ້ນຄວ້າປຶກສາຫາລືຫຼາຍຄັ້ງ ນຳຄະນະກຳມະການຝຶກອົບຮົມ ຊຶ່ງຄາດວ່າຫຼັງປັບປຸງ ແລະ ຮຽບຮຽງ ຈະມີການ ຮັບຮອງ ເພື່ອສາມາດນຳໄປຈັດຕັ້ງປະຕິບັດໃນກາງປີ 2020 ທີ່ຈະມາເຖິງນີ້;
- ກະກຽມ ພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສອ-ບກລ, ໃຫ້ສອດຄ່ອງກັບສະພາບເສດຖະກິດແລະສັງຄົມຂອງລາວໃນປະຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາ ສຳລັບວິຊາຊີບການບັນຊີ;
- ສ້າງປຶ້ມຄູ່ມືການບັນຊີ ຂອງ ສອ-ບກລ ເພື່ອເປັນຄູ່ມືໃນການຈັດຕັ້ງປະຕິບັດລະບຽບ ແລະ ນະໂຍບາຍທາງດ້ານການເງິນ.

### 1.3 ດ້ານການຈັດຕັ້ງ:

1.3.1 ຄະນະບໍລິຫານ ແລະ ບຸກຄະລາກອນ:

- ປະທານ 1 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 582/ກງ ລົງວັນທີ 22 ກຸມພາ(2)2014;
- ຮອງປະທານ 1 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ3778/ກງ ລົງວັນທີ 2 ພະຈິກ 2015);
- ຄະນະບໍລິຫານງານ 7 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2631/ກງ ລົງວັນທີ 16 ສິງຫາ 2018);
- ຫຼັງຈາກໄດ້ຮັບການແຕ່ງຕັ້ງແລ້ວຄະນະບໍລິຫານງານດັ່ງກ່າວ ໄດ້ມີການຈັດກອງປະຊຸມໃນໄລຍະທຸກໆ 2-3 ເດືອນ ເພື່ອຮ່ວມກັນວາງແຜນການຈັດຕັ້ງປະຕິບັດວຽກງານຂອງ ສອ-ບກລ;
- ຄະນະກຳມະການຝຶກອົບຮົມ 10 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ສະບັບເລກທີ 030/ສອ-ບກລ ລົງວັນທີ 12 ພຶດສະພາ 2016 ຂອງປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ). ຄະນະກຳມະການດັ່ງກ່າວໄດ້ມີການຈັດກອງປະຊຸມ 4 ຄັ້ງຕໍ່ປີ ເພື່ອຕິດຕາມ ແລະ ສະຫຼຸບຜົນການຈັດຕັ້ງປະຕິບັດຝຶກອົບຮົມທີ່ຜ່ານມາ ແລະ ແຜນການຝຶກອົບຮົມໃນຕໍ່ໜ້າ, ແຕ່ເນື່ອງຈາກວ່າ ຄະນະຈຳນວນໜຶ່ງ ບໍ່ສາມາດ ເຂົ້າຮ່ວມປະຊຸມຢ່າງຕໍ່ເນື່ອງ ຈຶ່ງມີແຜນ ປັບປຸງຄະນະດັ່ງກ່າວຄືນໃນປີ 2020;
- ຄະນະກຳມະການຈັນຍາບັນ ຈຳນວນ 7 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ສະບັບເລກທີ 001 ສອ-ບກລ ລົງວັນທີ 07 ມັງກອນ 2019) ຈານວນ 10 ທ່ານ. ຄະນະດັ່ງກ່າວທີ່ຖືກແຕ່ງຕັ້ງຍັງ ບໍ່ສາມາດເຄື່ອນໄຫວໄດ້ເທົ່າທີ່ຄວນ. ສະນັ້ນ, ຈະໄດ້ມີການປັບປຸງຄະນະດັ່ງກ່າວຄືນ;
- ກະກຽມຄັດເລືອກ ແລະ ແຕ່ງຕັ້ງຄະນະກຳມະການອື່ນໆ ແລະ ແບ່ງປັນໜ້າທີ່ຮັບຜິດຊອບ ແລະ ວາງແຜນຮ່ວມກັນໃນຕໍ່ໜ້າ;
- ບຸກຄະລາກອນ 5 ທ່ານ, ຍິງ 3 ທ່ານ. ປັດຈຸບັນກຳລັງປັບປຸງ ຊັບຊ້ອນໜ້າວຽກຂອງທີມງານຄືນໃໝ່, ພ້ອມນີ້ຍັງມີທີ່ປຶກສາດ້ານວິຊາການ 1 ທ່ານ.

## ໂຄງຮ່າງການຈັດຕັ້ງຂອງ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ



### 1.3.2 ສະມາຊິກ:

ໃນທ້າຍປີ 2019 ສວ-ບກລ ມີສະມາຊິກນິຕິບຸກຄົນທັງໝົດມີ 75 ບໍລິສັດທີ່ເຄື່ອນໄຫວປົກກະຕິ. ໃນທ້າຍເດືອນທັນວາ 2019 ໄດ້ປະສານ ແລະ ຮ່ວມມືກັບພະແນກກວດສອບ ກົມບັນຊີ ເພື່ອຕິດຕາມການເຄື່ອນໄຫວຂອງສະມາຊິກ ພ້ອມທັງສົມທຽບຂໍ້ມູນຂອງສະມາຊິກນິຕິບຸກຄົນ ແລະ ເຫັນວ່າຂໍ້ມູນຈຳນວນສະມາຊິກທີ່ກົມບັນຊີມີຫຼາຍກວ່າຂໍ້ມູນຂອງສວ-ບກລ ຈຳນວນ 14 ບໍລິສັດ ຊຶ່ງເປັນສາເຫດເຮັດໃຫ້ໂຕເລກຈຳນວນສະມາຊິກບໍ່ຕົງກັນ ໃນນັ້ນມີ 5 ບໍລິສັດສ້າງຕັ້ງໃນປີ 2017, 5 ບໍລິສັດສ້າງຕັ້ງໃນປີ 2018 ແລະ 4 ບໍລິສັດສ້າງຕັ້ງໃນປີ 2019. ຈຳນວນ 14 ບໍລິສັດດັ່ງກ່າວຍັງບໍ່ທັນໄດ້ມາຈົດທະບຽນເຂົ້າເປັນສະມາຊິກຂອງ ສວ-ບກລ ຕາມລະບຽບກົດໝາຍ. ເຖິງຢ່າງໃດກໍຕາມ ສວ-ບກລ ຍັງຈະໄດ້ປະສານສົມທົບກັບທາງກົມບັນຊີຕື່ມ ເພື່ອຊອກຫາວິທີທາງແກ້ໄຂ ໃຫ້ບໍລິສັດດັ່ງກ່າວເຂົ້າມາຈົດທະບຽນເປັນສະມາຊິກຂອງ ສວ-ບກລ.

ສະມາຊິກບຸກຄົນທັງໝົດ 213 ທ່ານ, ໃນນັ້ນມີ ສະມາຊິກສາມັນ 152, ສະມາຊິກສົມທົບປະກອບອາຊີບ 20 ທ່ານ ແລະ ບໍ່ປະກອບອາຊີບ 41 ທ່ານ.

ສະມາຊິກທັງໝົດໄດ້ແບ່ງອອກຕາມແຕ່ລະປະເພດ ມີດັ່ງນີ້:

ໂຄງຮ່າງສະແດງ ການຈຳແນກປະເພດສະມາຊິກຂອງ ສວ-ບກລ



### 1.3.3 ດ້ານນະໂຍບາຍ-ດ້ານການສົ່ງເສີມ ບຸກຄະລາກອນ:

- ການອົບຮົມການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຂອງ ສວ-ບກລ ໃນຫົວຂໍ້ມາດຕະຖານການລາຍງານການເງິນສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ຊຶ່ງສອນໂດຍຊ່ຽວຊານ ຈາກອົງການນັກຊ່ຽວຊານບັນຊີຝຣັ່ງ;
- ເຂົ້າຝຶກອົບຮົມ ກ່ຽວກັບ ລະບົບຂໍ້ມູນຂ່າວສານທາງດ້ານການບັນຊີ (Accounting Information - System);
- ໃຫ້ນະໂຍບາຍພະນັກງານ ສວ-ບກລ ເຂົ້າຮ່ວມຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີລາວຈໍານວນ 3 ທ່ານ.

## II. ດ້ານການເຄື່ອນໄຫວ:

### 2.1 ການປະສານງານ ແລະ ການຮ່ວມມື

- ປະສານ ແລະ ຮ່ວມມືກັບກະຊວງການເງິນ-ກົມບັນຊີ ເພື່ອຕິດຕາມການເຄື່ອນໄຫວຂອງສະມາຊິກ;
- ສືບຕໍ່ປະສານຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ, ຄະນະເສດຖະສາດ, ພາກບັນຊີ (NUoL) ແລະ ມະຫາວິທະຍາໄລສີປະທຸມ (SPU) ເພື່ອວາງແຜນຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານລະບົບຂໍ້ມູນຂ່າວສານທາງດ້ານການບັນຊີ ໃຫ້ແກ່ນັກບັນຊີລາວ ແລະ ນັກສຶກສາໃນລະດັບມະຫາວິທະຍາໄລ;
- ສືບຕໍ່ປະສານຮ່ວມມືກັບ CPA Australia ເພື່ອກະກຽມການຝຶກອົບຮົມ ຍົກລະດັບທາງດ້ານວິຊາຊີບການບັນຊີໃຫ້ແກ່ນັກຊ່ຽວຊານບັນຊີ;
- ສືບຕໍ່ປະສານຮ່ວມມືກັບ ACCA ເພື່ອວາງແຜນ ປັບປຸງລະບົບການຮຽນ ແລະ ການສອນ ຫຼັກສູດວິຊາຊີບຊ່ຽວຊານ ບັນຊີລາວ (Lao CPA) ໃຫ້ມີຄຸນນະພາບສູງສຸດ ໂດຍສະເພາະແມ່ນຫຼັກສູດການຮຽນ-ການສອນ ແລະ ເປັນຜູ້ສະໜັບສະໜູນການກຽມເຂົ້າເປັນສະມາຊິກ ສະຫະພັນນັກບັນຊີສາກົນ (IFAC);
- ປະສານກັບສະຖາບັນການທະນາຄານ ເພື່ອປຶກສາຫາລື ແລກປ່ຽນບົດຮຽນທາງດ້ານວິຊາການ.



- ປະສານກັບກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປລາວ ເພື່ອ ແລກປ່ຽນຂໍ້ມູນບໍລິສັດທີ່ປຶກສາບັນຊີ ແລະ ກວດສອບ ແລະ ວາງແຜນສະໜັບສະໜູນ ແລະ ໃຫ້ໂອກາດແກ່ບໍລິສັດທີ່ເປັນຂອງຄົນລາວສາມາດເຂົ້າເຖິງ ແລະ ມີສ່ວນແບ່ງທາງການຕະຫຼາດ ໂດຍສະເພາະແມ່ນກົມຄຸ້ມຄອງສະຖາບັນທະນາຄານ;
- ປະສານກັບມະຫາວິທະຍາໄລສິງກະໂປ (Singapore University of Social Sciences) ແລະ ຮັບນັກຮຽນຝຶກງານ , ການຝຶກງານແມ່ນສິ້ນສຸດໃນວັນທີ 31 ມີນາ (03) 2019.




**2.2 ການຈັດຝຶກອົບຮົມ:**

**2.2.1 ຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ**

ເພື່ອປະຕິບັດຕາມການກຳນົດຫຼັກການພື້ນຖານ ກ່ຽວກັບ ການເປັນນັກຊ່ຽວຊານບັນຊີລາວ ຊຶ່ງລວມມີການຝຶກອົບຮົມນັກຊ່ຽວຊານບັນຊີ ແລະ ການຝຶກງານເປັນນັກຊ່ຽວຊານບັນຊີລາວ ຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາ ທີ່ອອກໂດຍສະພາມາດຕະຖານສາກົນດ້ານການສຶກສາບັນຊີ ແນໃສ່ຮັບປະກັນໃຫ້ການຝຶກອົບຮົມດັ່ງກ່າວມີຄຸນນະພາບທີ່ເປັນທີ່ຍອມຮັບໄດ້; ປັດຈຸບັນ ສວ-ບກລ ໄດ້ເປີດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ 4 ລຸ້ນ ຄື: ລຸ້ນ XII, ລຸ້ນ XIII, ລຸ້ນ XIV ແລະ ລຸ້ນ XV, ຊຶ່ງລາຍລະອຽດແຕ່ລະຊຸດມີດັ່ງລຸ່ມນີ້:

- **ຝຶກອົບຮົມຫຼັກສູດວິຊາຊີບ ຊ່ຽວຊານບັນຊີ ລຸ້ນ XII:**

ໄດ້ສຳເລັດການສອບເສັງຄືນ ວິຊາໃນລະດັບນັກຊ່ຽວຊານ (ສຳລັບຜູ້ທີ່ເສັງບໍ່ຜ່ານໃນຮອບທີສອງ) ແລະ ກະກຽມເຂົ້າຝຶກອົບຮົມ ວິຊາ ຈັນຍາບັນສຳລັບນັກວິຊາຊີບການບັນຊີ ແລະ ລົງທະບຽນ ເພື່ອຝຶກງານ, ຊຶ່ງມີນັກຝຶກອົບຮົມທັງຫມົດ 132 ທ່ານ ໂດຍມີລາຍລະອຽດດັ່ງນີ້:

- ນັກຝຶກອົບຮົມທີ່ຮຽນເລີ່ມຕົ້ນແຕ່ວິຊາຂັ້ນພື້ນຖານ ມີ 83 ທ່ານ (ຍິງ 48 ທ່ານ, ຊາຍ 35 ທ່ານ, ໃນນັ້ນມີພະນັກງານລັດຖະກອນ 7 ທ່ານ, ຍິງ 5 ທ່ານ)
- ທີ່ປຶກສາບັນຊີລາວລຸ້ນ 1-11 ທີ່ມາເຊື່ອມຕໍ່ຍົກລະດັບ 5 ວິຊາ ໃນລະດັບວິຊາຊີບມີ 49 ທ່ານ (ຍິງ 24 ທ່ານ, ຊາຍ 25 ທ່ານ)



- **ຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ລຸ້ນ XIII.**

ໄດ້ສຳເລັດການສອບເສັງຄືນໃຫ້ນັກສຶກສາທີ່ເສັງບໍ່ຜ່ານ 9 ວິຊາຂັ້ນພື້ນຖານ F1-F9 ເພື່ອກຽມຄວາມພ້ອມໃຫ້ສາມາດສືບຕໍ່ຮຽນບັນດາວິຊາໃນລະດັບນັກຊ່ຽວຊານ ຊຶ່ງປະກອບມີ 4 ວິຊາ ແລະ ຈະເລີ່ມຮຽນໃນທ້າຍເດືອນມັງກອນ 2020, ຊຶ່ງມີນັກຝຶກອົບຮົມທັງໝົດ 125 ທ່ານ ພະນັກງານລັດ 16 ທ່ານ. ໃນນັ້ນ, ມີນັກຮຽນທີ່ຮຽນແຕ່ເລີ່ມຕົ້ນເສັງຜ່ານ 9 ວິຊາຂັ້ນພື້ນຖານ ສາມາດສືບຕໍ່ຮຽນ 88 ທ່ານ ພະນັກງານລັດ 10 ທ່ານ, ມີທີ່ປຶກສາບັນຊີລຸ້ນ 1-11 ເຂົ້າຮ່ວມເພື່ອຍົກລະດັບ 32 ທ່ານ ພະນັກງານລັດ 6 ທ່ານ, ນັກຮຽນຕ່າງປະເທດທີ່ຖືກຍົກເວັ້ນວິຊາພື້ນຖານ ມາຮຽນຕໍ່ລະດັບຊ່ຽວຊານ 3 ທ່ານ.



- **ຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ(CPA) ລຸ້ນ XIV.**

ການຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີ **(Lao CPA)** ລຸ້ນ **XIV**. ໃນທ້າຍປີ 2019 ແມ່ນຍັງຢູ່ໃນຂັ້ນຕອນຝຶກອົບຮົມວິຊາຂັ້ນພື້ນຖານ ( F1- F9) ຊຶ່ງມີນັກຝຶກອົບຮົມທັງໝົດ 110 ທ່ານ (ຍິງ 56 ທ່ານ, ຊາຍ 54 ທ່ານ. ໃນນັ້ນ,ມີພະນັກງານລັດຖະກອນ 3 ທ່ານ, ຍິງ 2 ທ່ານ).



- **ຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ(CPA) ລຸ້ນ XV.**

ໃນວັນທີ 17 ສິງຫາ 2019 ໄດ້ມີການສອບເສັງຄັດເລືອກ ເຂົ້າຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ **(Lao CPA)** ລຸ້ນ **XV** ທີ່ວິທະຍາໄລບຸດວິເສດ ມີຜູ້ເຂົ້າຮ່ວມສອບເສັງທັງໝົດ ຈຳນວນ 143 ທ່ານ, ຊຶ່ງໃນນັ້ນມີນັກຝຶກອົບຮົມສອບເສັງຜ່ານ ຈຳນວນ 115 ທ່ານ (ຍິງ 74 ທ່ານ, ຊາຍ 41 ທ່ານ. ໃນນັ້ນ, ມີພະນັກງານລັດຖະກອນ 14 ທ່ານ, ຍິງ 8 ທ່ານ) ແລະ ໄດ້ເລີ່ມເປີດຝຶກອົບໃນວັນທີ 07 ກັນຍາ (09) 2019 ທີ່ຜ່ານມາ, ຊຶ່ງປັດຈຸບັນແມ່ນຍັງຢູ່ໃນຂັ້ນຕອນຝຶກອົບຮົມວິຊາຂັ້ນພື້ນຖານ ( F1 ວິຊາ ນັກບັນຊີໃນວິສາຫະກິດທົ່ວໄປ).




### ຕາຕະລາງສັງລວມຈຳນວນ ນັກຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ(CPA) ແຕ່ລະລຸ້ນ ແບ່ງຕາມຂະແໜງການເຮັດວຽກ

| ສະຫຼຸບໂດຍປະເພດຂອງບ່ອນເຮັດວຽກ | ລຸ້ນ 12 | | | ລຸ້ນ 13 | | | ລຸ້ນ 14 | | | ລຸ້ນ 15 | | | ລວມ | | | ຄິດໄລ່ເປັນເປີເຊັນ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ຈ/ນ ນັກ ຮຽນ | ຊາຍ | ຍິງ | ຈ/ນ ນັກ ຮຽນ | ຊາຍ | ຍິງ | ຈ/ນ ນັກ ຮຽນ | ຊາຍ | ຍິງ | ຈ/ນ ນັກ ຮຽນ | ຊາຍ | ຍິງ | ຈ/ນ ນັກ ຮຽນ | ຊາຍ | ຍິງ | |
| ບໍລິສັດບັນຊີ ແລະ ກວດສອບລາວ | 48 | 23 | 25 | 16 | 10 | 6 | 15 | 8 | 7 | 12 | 4 | 8 | 91 | 45 | 46 | 19 % |
| ບໍລິສັດ ກວດສອບຕ່າງປະເທດ | 24 | 11 | 13 | 24 | 9 | 15 | 26 | 10 | 16 | 16 | 3 | 13 | 90 | 33 | 57 | 19 % |
| ບໍລິສັດ ມະຫາຊົນ | 19 | 7 | 12 | 19 | 12 | 7 | 8 | 3 | 5 | 14 | 5 | 9 | 60 | 27 | 33 | 12 % |
| ລັດຖະກອນ | 7 | 2 | 5 | 16 | 10 | 6 | 3 | 1 | 2 | 14 | 6 | 8 | 40 | 19 | 21 | 8% |
| ພາກສ່ວນ ອື່ນໆ | 34 | 17 | 17 | 50 | 27 | 23 | 58 | 32 | 26 | 59 | 23 | 36 | 201 | 99 | 102 | 42 % |
| ລວມທັງໝົດ | 132 | 60 | 72 | 125 | 68 | 57 | 110 | 54 | 56 | 115 | 41 | 74 | 482 | 223 | 25 9 | 100 % |

### 2.2.2 ການຝຶກອົບຮົມແບບຕໍ່ເນື່ອງ (CPD):

ເພື່ອປະຕິບັດຕາມລະບຽບການ ກ່ຽວກັບການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກໍານົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການຄຸ້ມຄອງ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສໍາລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກ ໂດຍສະພາມາດຕະຖານສາກົນດ້ານການສຶກສາ ແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງກ່າວໃຫ້ມີຄຸນນະພາບສູງ.

ສະນັ້ນ, ສອ-ບກລ ຈຶ່ງໄດ້ຈັດຝຶກອົບຮົມທາງດ້ານວິຊາຊີບແບບຕໍ່ເນື່ອງ ຊຶ່ງລາຍລະອຽດມີດັ່ງນີ້:

- ຈັດຝຶກອົບຮົມໃນຫົວຂໍ້ "ກົດໝາຍບັນຊີ ແລະ ຈັນຍາບັນນັກບັນຊີ" ໃຫ້ນັກຝຶກອົບຮົມຊ່ຽວຊານບັນຊີລຸ້ນ 12 ແລະ ທີ່ປຶກສາບັນຊີລຸ້ນ I-XII ທີ່ມາເຊື່ອມຕໍ່ຍົກລະດັບ ເພື່ອກຽມພ້ອມໃນການຝຶກອົບຮົມໃນວິຊາລະດັບວິຊາຊີບ ແນໃສ່ຍົກລະດັບຕົນເອງ ໃຫ້ກາຍເປັນນັກຊ່ຽວຊານບັນຊີ ຕາມລະບຽບການ ກ່ຽວກັບ ການເປັນນັກຊ່ຽວຊານບັນຊີລາວ ສະບັບເລກທີ 038/ສອບກລ, ລົງວັນທີ 08 ກໍລະກົດ (07) 2016.
- ສໍາລັບທີ່ປຶກສາບັນຊີລຸ້ນ I-XII ທີ່ມາເຊື່ອມຕໍ່ຍົກລະດັບ ໃນວິຊາລະດັບວິຊາຊີບ ເພື່ອກາຍເປັນນັກຊ່ຽວຊານບັນຊີ. ສອ-ບກລ ໄດ້ຄິດໄລ່ຊົ່ວໂມງ CPD ໃຫ້ຜູ້ທີ່ເປັນສະມາຊິກ 6 ຊົ່ວໂມງ/ວິຊາ.



- ວັນທີ 13-15 ເມສາ (05) 2019 ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ຮ່ວມກັບມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລສີປະທຸມ-ປະເທດໄທ ໄດ້ຈັດຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານ" ລະບົບຂໍ້ມູນຂ່າວສານທາງດ້ານການບັນຊີ"ໃຫ້ແກ່ນັກບັນຊີລາວ ແລະ ນັກສຶກສາໃນລະດັບມະຫາວິທະຍາໄລ, ທີ່ມະຫາວິທະຍາໄລແຫ່ງຊາດລາວ ຊຶ່ງມີຜູ້ເຂົ້າຮ່ວມທັງຫມົດ 50 ທ່ານ ແລະ ໃຫ້ກຽດເປັນປະທານເປີດການຝຶກອົບຮົມໂດຍ ທ່ານ ເພັດສະໝອນ ພົມມະວົງ ຮັກສາການຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ.






### 2.2.3 ຝຶກອົບຮົມຫົວຂໍ້ສະເພາະ:

- ເສັງທົດສອບຄວາມສາມາດ:

ອີງຕາມມາດຕາ 8 ຂອງລະບຽບການກ່ຽວກັບການເປັນນັກຊ່ຽວຊານບັນຊີ ສະບັບເລກທີ 038/ສອ-ບກລ ລົງວັນທີ 8 ກໍລະກົດ 2016.

ເພື່ອສາມາດຮັບຮູ້ ການປະກອບອາຊີບນັກບັນຊີ ໃນ ສປປ ລາວ ຂອງຜູ້ທີ່ມີໃບຢັ້ງຢືນນັກຊ່ຽວຊານບັນຊີຈາກຕ່າງປະເທດ, ສະພາວິຊາຊີບນັກຊ່ຽວຊານບັນຊີ ແລະ ນັກກວດສອບ, ໂດຍປະຕິບັດຕາມບົດບາດໜ້າທີ່ຂອງຕົນ ໄດ້ຈັດສອບເສັງທົດສອບຄວາມສາມາດ. ການສອບເສັງທົດສອບຄວາມສາມາດໃນປີນີ້ເປັນຄັ້ງທີ່ສອງ ແມ່ນມີຄວາມແຕກຕ່າງຈາກຄັ້ງທີ່ຜ່ານມາ. ສຳລັບຂົງເຂດລະບຽບກົດໝາຍ ການສອບເສັງປະກອບດ້ວຍ: ກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍການກວດສອບອິດສະລະ, ກົດລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ຈັນຍາບັນສຳລັບນັກວິຊາຊີບການບັນຊີ, ກົດໝາຍວ່າດ້ວຍຫຼັກຊັບ, ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ.

ສຳລັບຮູບແບບຂອງການສອບເສັງແມ່ນ ໄດ້ຈັດຕັ້ງການຝຶກອົບຮົມ ໄລຍະສັ້ນ ໃຫ້ກັບນັກສອບເສັງທຸກທ່ານໃນຂົງເຂດລະບຽບກົດໝາຍດັ່ງກ່າວ. ຈາກນັ້ນ, ຈຶ່ງມີການສອບເສັງທົດສອບຄວາມສາມາດ ດ້ວຍການຂຽນໃນຮູບແບບ ປາລະໄນ ແລະ ອັດຕາໄນ. ການສອບເສັງຈັດແບ່ງເປັນ 3 ວັນ: ວັນທີ 6 ເມສາ 2019 ແມ່ນໄດ້ຈັດການຝຶກອົບຮົມ ແລະ ຈັດການສອບເສັງລະບຽບກົດໝາຍດ້ານການບັນຊີ ແລະ ລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ; ວັນທີ 7 ເມສາ 2019 ແມ່ນໄດ້ຈັດການຝຶກອົບຮົມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ລະບຽບການອື່ນທີ່ພົວພັນກັບວິສາຫະກິດ; ວັນສຸດທ້າຍວັນທີ 8 ເມສາ 2019 ແມ່ນຈັດການສອບເສັງ ກົດໝາຍວ່າດ້ວຍການກວດສອບອິດສະລະ ແລະ ຈັນຍາບັນສຳລັບນັກວິຊາຊີບການບັນຊີ. ການໃຫ້ຄະແນນ ມີ 4 ລະດັບ ຄື: ອ່ອນ, ກາງ, ດີ ແລະ ດີຫຼາຍ, ຊຶ່ງມີຜູ້ເຂົ້າສອບເສັງ ແລະ ເສັງຜ່ານຈານວນ 21 ທ່ານ.

ພາຍຫຼັງທີ່ມີຜູ້ສຳເລັດການສອບເສັງທົດສອບຄວາມສາມາດ, ໂດຍປະຕິບັດຕາມມາດຕາ 8- ຂໍ້ຍົກເວັ້ນສຳລັບການເຂົ້າຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ-ຂອງລະບຽບການ ກ່ຽວກັບ ການເປັນນັກຊ່ຽວຊານບັນຊີລາວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ສະບັບເລກທີ 038/ສອ-ບກລ ລົງວັນທີ 8 ກໍລະກົດ 2016 ແລະ ໂດຍປະຕິບັດຕາມ ມາດຕາ 37 - ໃບຢັ້ງຢືນນັກຊ່ຽວຊານບັນຊີ - ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ ສະບັບເລກທີ 51/ສພຊ ລົງວັນທີ 22 ກໍລະກົດ 2014, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໄດ້ຂຽນບົດລາຍງານຮຽນສະເໜີເຖິງກົມບັນຊີ ເພື່ອນຳສະເໜີທ່ານລັດຖະມົນຕີກະຊວງການເງິນພິຈາລະນາເຊັນຮັບຮອງໃບຢັ້ງຢືນນັກຊ່ຽວຊານບັນຊີລາວ ສຳລັບບັນດາບຸກຄົນທີ່ໄດ້ເສັງຜ່ານການທົດສອບຄວາມສາມາດຈຳນວນ 21 ທ່ານ.

- ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໂດຍຮ່ວມມືກັບ CPA Australia ແລະ EY ໄດ້ຮ່ວມກັນຈັດສໍາມະນາໃນຫົວຂໍ້ກອງປະຊຸມວິຊາການ ກ່ຽວກັບ ມາດຕະຖານກ່ຽວກັບການລາຍງານການເງິນສໍາລັບວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະຂະໜາດໃຫຍ່ (LFRS) ກອງປະຊຸມຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 100 ກວ່າຄົນ. ແຜນການສໍາມະນາຄັ້ງນີ້ ແມ່ນໜຶ່ງໃນການປະກອບສ່ວນໃນລະດັບສາກົນໃນການແລກປ່ຽນຄວາມຮູ້ ແລະ ຂະຫຍາຍການໃຫ້ບໍລິການດ້ານການເງິນ ແລະ ບັນຊີໃນປະເທດລາວ. ການຝຶກອົບຮົມໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 01 ຕຸລາ (10) 2019 ທີ່ໂຮງແຮມລາວພຣາຊາ.






- ໃນວັນທີ 25-29 ເດືອນພະຈິກ 2019 ໄດ້ມີການຈັດການຝຶກອົບຮົມກ່ຽວກັບ ມາດຕະຖານການລາຍງານສາກົນ ( LFRS ) ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ສອນໂດຍຊ່ຽວຊານ ຈາກອົງການຈັດຕັ້ງນັກຊ່ຽວຊານບັນຊີຝຣັ່ງ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 23 ທ່ານ ໃນນັ້ນມາຈາກ ກົມບັນຊີ 3 ທ່ານ ແລະ ກົມອາກອນ 4 ທ່ານ.



### 2.2.4 ການຈັດ ແລະ ການເຂົ້າຮ່ວມປະຊຸມ:

- ໃນວັນທີ 26 ມັງກອນ 2019 ໄດ້ມີການຈັດສຳມະນາ ແລະ ງານເປີດຕົວຂອງ CMA ຈຸດປະສົງເພື່ອຍົກລະດັບຄວາມຮູ້ທາງດ້ານທິດສະດີ, ຄວາມສາມາດທາງດ້ານວິຊາຊີບ ການບັນຊີ ແລະ ກວດສອບ ໃຫ້ແກ່ສະມາຊິກຂອງ ສວ-ບກລ, ນັກຊ່ຽວຊານບັນຊີລາວ ແລະ ບຸກຄົນອື່ນໆ ທີ່ສົນໃຈ,  ຊຶ່ງມີຜູ້ເຂົ້າຮ່ວມທັງໝົດໜຶ່ງຮ້ອຍກວ່າຄົນ.





- ວັນທີ 9-14 ເມສາ (04) 2019 ໄດ້ເຂົ້າຮ່ວມກອງປະຊຸມສະພາຄະນະບໍລິຫານຂອງສະຫະພັນນັກບັນຊີອາຊຽນ (AFA Council Meeting) ຄັ້ງທີ 128, ຊຶ່ງເຂົ້າຮ່ວມໃນນາມເປັນສະມາຊິກ ຂອງສະຫະພັນນັກບັນຊີອາຊຽນ ທີ່ບາລີ, ປະເທດອິນໂດເນເຊຍ.



- ໃນວັນທີ 26 ເມສາ 2019 ໄດ້ມີການຈັດກອງປະຊຸມປະຈຳປີ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຂຶ້ນທີ່ໂຮງແຮມແກຣນວຽງຈັນ (Grand Vientiane Hotel) ຊຶ່ງມີຜູ້ເຂົ້າຮ່ວມຈາກກົມບັນຊີ, ບັນດາສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງທັງໝົດ 65 ຄົນ ແລະ ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມບັນຊີ ກະຊວງການເງິນ ແລະ ໃຫ້ກຽດເປັນປະທານ ໂດຍທ່ານ ນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີກະຊວງ ການເງິນ. ຈຸດປະສົງຕົ້ນຕໍຂອງກອງປະຊຸມແມ່ນ; ເພື່ອຕີລາຄາຄືນວຽກງານການເຄື່ອນໄຫວວຽກຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບລາວໃນປີຜ່ານມາລວມທັງ ດ້ານດີ ດ້ານອ່ອນ ເພື່ອເປັນຂໍ້ມູນໃນການວາງແຜນປັບປຸງໃນຕໍ່ໜ້າ ແລະ ເພື່ອວາງແຜນການເຄື່ອນໄຫວວຽກງານໃນປີ 2019.





- ໃນວັນທີ 28 ພະຈິກ 2019, ໄດ້ມີປະຊຸມກັບກົມບັນຊີ ກະຊວງການເງິນ ເພື່ອປຶກສາຫາລືບັນຫາໃນບັນດາບົດລາຍງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແຕ່ປີ 2014-2019 ຊຶ່ງປະກອບມີ ບັນຫາກ່ຽວກັບອາຍຸການຂອງຄະນະບໍລິຫານງານ ຂອງ ສວ-ບກລ ໂດຍສະເພາະ ແມ່ນອາຍຸການຂອງປະທານ ແລະ ຮອງປະທານ.
- ໃນວັນທີ 12-15 ພະຈິກ, 2019 ປະທານພ້ອມດ້ວຍຮອງປະທານ ຂອງ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມສາມັນປະຈໍາປີ ຂອງສະຫາພັນນັກບັນຊີສາກົນ (IFAC) ທີ່ແວງຄູເວີ ປະເທດການາດາ, ຊຶ່ງກອງປະຊຸມຄັ້ງນີ້ເປັນກອງປະຊຸມທີ່ມີຂີດໝາຍອັນສໍາຄັນສໍາລັບປະເທດລາວ ກໍຄືນັກວິຊາຊີບບັນຊີບັນຊີລາວ ເພາະວ່າ ສວ-ບກລ ໄດ້ຖືກຮັບຮອງເປັນສະມາຊິກສົມທົບ ຂອງ IFAC ຢ່າງເປັນທາງການໃນວັນທີ 13 ພະຈິກ (11) 2019



- ໃນວັນທີ 25 ພະຈິກ, 2019 ເຂົ້າຮ່ວມກອງປະຊຸມ AFA ຄັ້ງທີ 129 ທີ່ປະເທດ ສິງກະໂປ ກອງປະຊຸມໄດ້ສະເໜີກ່ຽວກັບແຜນຍຸດທະສາດຂອງ AFA ປີ 2020-2023 ພ້ອມທັງທົບທວນຄືນ ແຜນຍຸດທະສາດຂອງ AFA ສົກປີ 2016-2019 ແລະ ການສະໝັກເຂົ້າເປັນສະມາຊິກຂອງ AFA ແລະ ກົດລະບຽບຂອງ AFA.



- ເຂົ້າຮ່ວມກອງປະຊຸມ ຊຶ່ງຈັດຂຶ້ນໂດຍ IFAC ໃນວັນທີ 9-13 ທັນວາ ທີ່ປະເທດມາເລເຊຍ ກອງປະຊຸມໄດ້ຄົ້ນຄ້ວາກ່ຽວກັບ Developing Accountancy Capacity in Emerging Economies.



- ເຂົ້າຮ່ວມກອງປະຊຸມ ກັບຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອປຶກສາຫາລືກ່ຽວກັບ ການນຳໃຊ້ມາດຕະຖານການລາຍງານການເງິນ ( LFRS).
- ກອງປະຊຸມຄະນະບໍລິຫານງານ ໃນວັນທີ 26 ທັນວາ 2019. ໃນກອງປະຊຸມໄດ້ປຶກສາຫາລື ກ່ຽວກັບວຽກບໍລິຫານຫ້ອງການ ແລະ ຮ່າງລະບຽບການຝຶກງານສຳລັບຫຼັກສູດນັກຊ່ຽວຊານບັນຊີລາວ.



## III. ດ້ານການເງິນ:

### 3.1 ລາຍຮັບ:

ແຫຼ່ງລາຍຮັບຕົ້ນຕໍແມ່ນໄດ້ມາຈາກການຝຶກອົບຮົມນັກຊ່ຽວຊານບັນຊີລາວ ຊຸດ 12, ຊຸດ 13, ຊຸດ 14 ແລະ ຊຸດ 15, ຮັບຈາກຄ່າບຳລຸງສະມາຊິກບຸກຄົນ ແລະ ສະມາຊິກນິຕິບຸກຄົນ, ຮັບຈາກການຝຶກອົບຮົມຍົກລະດັບ ໃຫ້ນັກຊ່ຽວຊານບັນຊີລຸ້ນ 1-12, ຮັບຈາກການສະໜັບສະໜູນກອງປະຊຸມ ຈາກສະມາຊິກ ສອ-ບກລ ແລະ ພາກສ່ວນອື່ນ ໆ.

### 3.2 ຂີດເຂດລາຍຈ່າຍ:

ແຫຼ່ງລາຍຈ່າຍຕົ້ນຕໍສຳລັບປີ 2019 ແມ່ນຈ່າຍສຳລັບການຝຶກອົບຮົມນັກຊ່ຽວຊານບັນຊີລາວ ຊຸດ 12, ຊຸດ 13, ຊຸດ 14 ແລະ ຊຸດ 15, ຈ່າຍຄ່າບໍລິຫານຫ້ອງການເປັນຕົ້ນຄ່າເຊົ່າຫ້ອງການ, ຄ່າເຊົ່າສະຖານທີ່ຝຶກອົບຮົມ, ຈ່າຍຄ່າຕອບແທນພະນັກງານ (ເງິນເດືອນ), ອາກອນເງິນເດືອນ, ປະກັນສັງຄົມ, ຈ່າຍຊື້ພາຫະນະຮັບໃຊ້ ໃນການເຄື່ອນໄຫວວຽກ, ຈ່າຍຄ່າບຳລຸງສະມາຊິກສະຫະພັນນັກບັນຊີອາຊຽນ ແລະ ຈ່າຍຄ່າບຳລຸງສະມາຊິກສະຫະພັນນັກບັນຊີສາກົນ, ຈ່າຍຄ່າບໍລິການກວດສອບບັນຊີ ແລະ ຈ່າຍສຳລັບກອງປະຊຸມປະຈຳປີ 2018 ຂອງ ສອ-ບກລ. ຈ່າຍສຳລັບທີ່ປຶກສາທາດ້ານວິຊາການເຊັ່ນ: ຄ່າເບັ້ຍລ້ຽງ, ການເດີນທາງ ແລະ ທີ່ພັກອາໄສ. ນອກຈາກນີ້ ຍັງມີຄ່າໃຊ້ຈ່າຍສະໜັບສະໜູນ ກົມບັນຊີ-ກະຊວງການເງິນເຊັ່ນ: ສະໜັບສະໜູນໃນການເຂົ້າຮ່ວມກອງປະຊຸມສຳມະນາທັງພາຍໃນ-ຕ່າງປະເທດ ແລະ ງານລ້ຽງຕ່າງ ໆ ທີ່ຈຳເປັນ. (ມີເອກະສານລາຍງານການເງິນປະຈຳປີ 2019 ຄັດຕິດຢູ່ດ້ານຫຼັງ)

## ແຜນການເຄື່ອນໄຫວປະຈໍາປີ 2020

- ກະກຽມບົດລາຍງານການເຄື່ອນໄຫວວຽກງານ ພ້ອມທັງສະຫຼຸບງົບປະມານ ປະຈໍາປີ 2019 ຂອງ ສອ-ບກລ;
- ສືບຕໍ່ຄົ້ນຄວ້າສ້າງລະບຽບການຝຶກງານ ສໍາລັບຊຸດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ ແລະ ສາມາດນໍາໃຊ້ເຂົ້າໃນສະພາບການຕົວຈິງຂອງລາວ. ລະບຽບການດັ່ງກ່າວ ແມ່ນຍັງຢູ່ໃນຂັ້ນຕອນການປັບປຸງ ແລະ ຮຽບຮຽງ ຫລັງຈາກນັ້ນເຊັນຮັບຮອງ ເພື່ອສາມາດນໍາໄປຈັດຕັ້ງປະຕິບັດໃນປີ 2020;
- ສືບຕໍ່ກະກຽມ ພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສອ-ບກລ ແລະ ໃຫ້ສອດຄ່ອງກັບສະພາບເສດຖະກິດແລະສັງຄົມຂອງລາວໃນປະຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບ ໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາສໍາລັບວິຊາຊີບການບັນຊີ;
- ສືບຕໍ່ແປປື້ມຄູ່ມືບັນຊີ ແລະ ການເງິນຈາກພາສາອັງກິດ ເປັນພາສາລາວ ພ້ອມເຊັນຮັບຮອງ ເພື່ອໃຫ້ສາມາດນໍາໃຊ້ໄດ້ໃນປີ2020 ແລະ ເພື່ອເປັນຄູ່ມືໃນການຈັດຕັ້ງປະຕິບັດລະບຽບ ແລະ ນະໂຍບາຍທາງດ້ານການເງິນ;
- ກະກຽມປັບປຸງໂຄງຮ່າງການຈັດຕັ້ງຂອງຄະນະກໍາມະການຝຶກອົບຮົມ;
- ປະສານຮ່ວມມືກັບສະຖາບັນທະນາຄານເພື່ອປຶກສາຫາລື ຄວາມເປັນໄປໄດ້ສໍາລັບໂຄງການຮ່ວມຈັດຕັ້ງປະຕິບັດການຝຶກອົບຮົມທາງດ້ານວິຊາການ ແລະ ວາງແຜນການເຊັນບົດບັນທຶກຊ່ວຍຈໍາຮ່ວມກັນ;
- ວາງແຜນຈັດຝຶກອົບຮົມ ກ່ຽວກັບ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກໍານົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການຄຸ້ມຄອງການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສໍາລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກ ໂດຍສະພາມາດຕະຖານສາກົນດ້ານການສຶກສາແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງ ກ່າວໃຫ້ມີຄຸນນະພາບສູງ;
- ວາງແຜນເປີດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ລຸ້ນ 16, ຄາດວ່າຈະເປີດລົງທະບຽນສອບເສັງຄັດເລືອກໃນໃນທ້າຍປີ 2020 ແລະ ເປີດຮຽນໃນຕົ້ນປີ 2021;
- ສຶກສາຄວາມເປັນໄປໄດ້ໃນການເປີດການຮຽນ-ການສອນ ໃນລະບົບອອນລາຍ
- ປັບປຸງໂຄງຮ່າງການຈັດຕັ້ງຂອງ ສອ-ບກລ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານແຕ່ລະຄົນຄືນໃໝ່
- ສືບຕໍ່ຮ່ວມມືກັບພະແນກກວດສອບ ກົມບັນຊີ ເພື່ອຕິດຕາມສະມາຊິກ ຜູ້ທີ່ບໍ່ປະຕິບັດລະບຽບ ແລະ ບໍ່ປະຕິບັດພັນທະ, ຜູ້ທີ່ຍັງບໍ່ທັນເຂົ້າເປັນສະມາຊິກຂອງ ສອ-ບກລ.

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ(03) 2020

**ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ** | **ຜູ້ລາຍງານ**

ປະທານ

**ດຣ.ນ.ພິລານີ ພິດສະໄໝ**

ປ່ອກ ສີສົງຄາມ
Pock SISONGKHAM